ກົມຄຸ້ມຄອງວິສາຫະກິດລັດລົງທຶນ
ແລະ ການປະກັນໄພ
ເລກທີ 1517
ວັນທີ 29/8/16

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 1199 /ຫສນຍ.ກລຂ.

ນະຄອນຫຼວງວຽງຈັນ, ວັນທີ 17 - 8 - 2016

ກະຊວງການເງິນ
ເວລາ 11:26
ວັນທີເຂົ້າ 19/8/16
ເລກທີເຂົ້າ 2723
ສົ່ງເຖິງ ...

## ແຈ້ງການ

**ຮຽນ :** - ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງການເງິນ ທີ່ນັບຖື.

- ທ່ານລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ.

**ເລື່ອງ :** ການໂຈະຮັບຄຳຮ້ອງຂໍອະນຸຍາດລົງທຶນໃນທຸລະກິດການປະກັນໄພ ສຳລັບບໍລິສັດ ທີ່ສ້າງຕັ້ງໃໝ່.

- ອີງຕາມໜັງສືສະເໜີ ສະບັບເລກທີ 2105/ກງ, ລົງວັນທີ 8 ກໍລະກົດ 2016 ຂອງກະຊວງການເງິນ.

- ອີງຕາມການຊີ້ນຳ ແລະ ຕົກລົງ ຂອງທ່ານນາຍົກລັດຖະມົນຕີ ໃນວັນທີ 26 ກໍລະກົດ 2016.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຊີ້ນຳ ແລະ ຕົກລົງ ຂອງທ່ານນາຍົກລັດຖະມົນຕີມາຍັງທ່ານຊາບ ດັ່ງນີ້ " 1). **ເຫັນດີໃຫ້ໂຈະການຮັບຄຳຮ້ອງຂໍອະນຸຍາດລົງທຶນໃນທຸລະກິດການປະກັນໄພ ສຳລັບບໍລິສັດທີ່ຂໍສ້າງຕັ້ງໃໝ່ເປັນການຊົ່ວຄາວ ຕາມການສະເໜີຂອງກະຊວງການເງິນ.**

2). **ສຳລັບຄຳຮ້ອງຂໍອະນຸຍາດລົງທຶນໃນທຸລະກິດການປະກັນໄພ ທີ່ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ໄດ້ຮັບ ແລະ ສະໂໜດນຳສົ່ງ ມາຫາກະຊວງການເງິນແລ້ວ ແມ່ນເຫັນດີໃຫ້ສືບຕໍ່ຄົ້ນຄວ້າ ".**

**ໝາຍເຫດ** ແຈ້ງການສະບັບນີ້ປ່ຽນແທນແຈ້ງການສະບັບເລກທີ 1164/ຫສນຍ.ກລຂ, ລົງວັນທີ 11 ສິງຫາ 2016.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ຫົວໜ້າ ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ສຳນັກງານນາຍົກລັດຖະມົນຕີ
ລັດຖະມົນຕີ, ຫົວໜ້າຫ້ອງວ່າການ

ສົມສະນິດ ສຸວັນນະລາດ

ບ່ອນນຳສົ່ງ:

| | |
|---|---|
| - ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ກະຊວງອຸດສາຫະກຳ ແລະ ການຄ້າ | 01 ສະບັບ |
| - ສຳເນົາ | 08 ສະບັບ |